# ເອກະສານລາຍງານການເງິນປະຈຳໄຕມາດ 1
# ສິ້ນສຸດ 31 ມີນາ 2024




ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

Souvanny Home Center Public Company

PHONTONGSAVAT RD, PHONTONG VILLAGE, CHANTHABULY DISTRICT, VIENTIANE CAPITAL OFFICE; (856 21) 415645, FAX; (856 21) 262984, WWW.SOUVANNY.LA

## ສາລະບານ


I. ໃບສະຫຼຸບຊັບສິນບັດ ........................................................................ 2-3

II. ໃບລາຍງານຜົນໄດ້ຮັບ (ສໍາລັບໄຕມາດ 1) ........................................................ 4

III. ໃບລາຍງານສ່ວນປ່ຽນແປງທຶນຂອງຜູ້ຖືຮຸ້ນ........................................................ 5

IV. ໃບລາຍງານ ກະແສເງິນສົດ........................................................................6-7

1. ຂໍ້ມູນທົ່ວໄປ........................................................................ 8

2. ພື້ນຖານໃນການກະກຽມ ........................................................................ 8

3. ການຄາດຄະເນ ........................................................................ 8

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ........................................................................ 9

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ........................................................................9-10

6. ສິນຄ້າໃນສາງ ສຸດທິ........................................................................ 10

7. ຊັບສິນໝູນວຽນອື່ນໆ........................................................................11

8. ທີ່ດິນ ແລະ ອຸປະກອນ, ສຸດທິ ........................................................................ 11

9. ຊັບສິນຄົງທີ່ ບໍ່ມີຕົນຕົນ, ສຸດທິ........................................................................ 11

10. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ ........................................................................ 12

11. ເງິນກູ້ຢືມຈາກສະຖາບັນການເງິນ........................................................................12-13

12. ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້........................................................................ 13

13. ສໍາຮອງ ........................................................................ 14

ສໍາຮອງຕາມກົດໝາຍ ........................................................................ 14

ສໍາຮອງອື່ນໆ ........................................................................ 14

14. ເງິນປັນຜົນ ........................................................................ 14

15. ລາຍຈ່າຍອາກອນກໍາໄລ........................................................................ 14

16. ກໍາໄລຕໍ່ຮຸ້ນ ........................................................................ 15

17. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ........................................................................ 15

17.1 ລາຍຮັບ ແລະ ລາຍຈ່າຍ........................................................................ 15

17.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ........................................................................ 16

17.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ ........................................................................ 16

18. ລາຍຈ່າຍໃນການຂາຍ ແລະ ບໍລິຫານ ........................................................................ 16

19. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສໍາຄັນ ........................................................................ 16

| | ບົດ ອະທິບາຍ | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 4 | 106.412.225.410 | 97.622.510.973 |
| ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | 5 | 7.058.195.698 | 5.564.004.643 |
| ເຄື່ອງໃນສາງ, ສຸດທິ | 6 | 491.029.533.566 | 484.347.770.402 |
| ຊັບສິນໝູນວຽນອື່ນໆ | 7 | 46.898.656.905 | 38.424.118.275 |
| ລວມຊັບສິນໝູນວຽນ | | 651.398.611.579 | 625.958.404.293 |
| **ຊັບສິນບໍ່ໝູນວຽນ** | | | |
| ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ | 8 | 1.202.278.653.650 | 1.171.299.214.767 |
| ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ | 9 | 408.580.883 | 365.075.938 |
| ຊັບສິນບໍ່ໝູນວຽນອື່ນໆ | | 13.262.366.676,00 | 8.730.500.190 |
| ລວມຊັບສິນບໍ່ໝູນວຽນ | | 1.215.949.601.209 | 1.180.394.790.895 |
| **ລວມຊັບສິນ** | | **1.867.348.212.788** | **1.806.353.195.188** |

ວັດດານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່
ວັນທີ: 03 ພຶດສະພາ 2024

ພັນໄນລາ ສຸຄະບັນດິດ
ຜູ້ອໍານວຍການ ຝ່າຍການເງິນ
ວັນທີ: 03 ພຶດສະພາ 2024

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

| | ບົດ ອະທິບາຍ | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນຕົນເອງ** | | | |
| **ໜີ້ສິນໝູນວຽນ** | | | |
| ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | 11 | 40.387.545.687 | 54.694.740.214 |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ | 10 | 89.788.117.656 | 65.565.702.900 |
| ສ່ວນທີ່ໝູນວຽນ ຂອງເງິນກູ້ໄລຍະຍາວ | 11 | 30.973.530.533 | 26.353.809.980 |
| ໜີ້ຕ້ອງສົ່ງອາກອນກຳໄລ | | 16.278.500.702 | 12.359.633.801 |
| ເງິນກູ້ຢືມຈາກລູກຄ້າ | | 2.718.816.395 | 2.952.230.119 |
| ໜີ້ສິນໝູນວຽນອື່ນໆ | | 12.647.162.910 | 19.538.533.683 |
| ລວມໜີ້ສິນໝູນວຽນ | | 192.793.673.883 | 181.464.650.697 |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ | 11 | 53.069.849.760 | 48.063.332.611 |
| ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້ | 12 | 63.859.415.400 | 62.116.071.600 |
| ລວມໜີ້ສິນບໍ່ໝູນວຽນ | | 116.929.265.160 | 110.179.404.211 |
| **ລວມໜີ້ສິນ** | | 309.722.939.043 | 291.644.054.908 |
| **ທຶນຕົນເອງ** | | | |
| ທຶນຈົດທະບຽນ | | | |
| ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ | | | |
| ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ | | 330.000.000.000 | 330.000.000.000 |
| ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ | | | |
| ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ | | 330.000.000.000 | 330.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 24.735.724.722 | 24.735.724.722 |
| ກຳໄລສະສົມ | | | |
| ເງິນສຳຮອງຕາມກົດໝາຍ | 13 | 20.181.970.566 | 20.181.970.566 |
| ເງິນສຳຮອງອື່ນໆ | 13 | 19.931.970.566 | 19.931.970.566 |
| ກຳໄລຖ້າແບ່ງປັນ | | 268.852.061.127 | 250.094.367.876 |
| ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | 893.923.546.765 | 869.765.106.550 |
| ລວມທຶນຕົນເອງ | | 1.557.625.273.746 | 1.514.709.140.280 |
| **ລວມໜີ້ສິນ ແລະ ທຶນຕົນເອງ** | | **1.867.348.212.788** | **1.806.353.195.188** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດຖານາ ສຸຄະບັນດິດ
**ຜູ້ອຳນວຍການໃຫຍ່**
**ວັນທີ: 03 ພຶດສະພາ 2024**

ພັນໄນລາ ສຸຄະບັນດິດ
**ຜູ້ອຳນວຍການ ຝ່າຍການເງິນ**
**ວັນທີ: 03 ພຶດສະພາ 2024**

| | ບົດ ອະທິບາຍ | 31 ມີນາ 2024 ກີບ | 31 ມີນາ 2023 ກີບ |
|---|---|---|---|
| ລາຍໄດ້ຈາກການຂາຍ | | 231.488.824.877 | 191.662.411.358 |
| ຕົ້ນທຶນໃນການຂາຍ | | (173.017.309.090) | (141.522.185.929) |
| **ກຳໄລລວມຂັ້ນຕົ້ນ** | | **58.471.515.787** | **50.140.225.429** |
| ລາຍຮັບອື່ນໆ | | 747.440.997 | 643.522.322 |
| ລາຍຈ່າຍໃນການຂາຍ | | (21.954.920.282) | (15.700.118.137) |
| ລາຍຈ່າຍບໍລິຫານ | | (12.059.425.709) | (10.082.427.509) |
| ລາຍຈ່າຍການເງິນ | | (1.918.722.387) | (1.817.422.916) |
| ກຳໄລຈາກອັດຕາແລກປ່ຽນ ສຸດທິ | | (836.048.115) | 1.919.229.625 |
| **ກຳໄລ ກ່ອນຈ່າຍອາກອນກຳໄລ** | | **22.449.840.291** | **25.103.008.814** |
| ອາກອນກຳໄລ | 15 | (3.692.147.040) | (4.868.946.662) |
| **ກຳໄລສຸດທິ** | | **18.757.693.251** | **20.234.062.152** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | 16 | 114 | 123 |

ວັດດານາ ສຸດຂະບັນດິດ
ຜູ້ອຳນວຍການໃຫຍ່
**ວັນທີ: 03 ພຶດສະພາ 2024**

ພັນໂນລາ ສຸດຂະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
**ວັນທີ: 03 ພຶດສະພາ 2024**

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

| | ບົດ ອະທິບາຍ | ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ | ສ່ວນເພີ່ມ ມູນຄ່າຮຸ້ນ ກີບ | ສໍາຮອງເງິນ ຕາມກົດໝາຍ ກີບ | ສໍາຮອງເງິນ ອື່ນໆ ກີບ | ກໍາໄລສະສົມ ລໍຖ້າແບ່ງປັນ ກີບ | ຜົດຕ່າງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ | ລວມ ກີບ |
|---|---|---|---|---|---|---|---|---|
| **ຍອດຍົກມາ ວັນທີ 1 ມັງກອນ 2023** | | 330.000.000.000 | 24.735.724.722 | 14.102.046.968 | 13.852.046.968 | 217.954.979.089 | 548.444.251.473 | 1.149.089.049.219 |
| ສໍາຮອງເງິນຕາມກົດໝາຍ | | - | - | - | - | - | - | - |
| ສໍາຮອງເງິນອື່ນໆ | | - | - | - | - | - | - | - |
| ກໍາໄລສຸດທິ | | - | - | - | - | 20.234.062.152 | - | 20.234.062.152 |
| ຈ່າຍເງິນປັນຜົນ | | - | - | - | - | - | - | - |
| ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 15.762.889.125 | 15.762.889.125 |
| **ຍອດເຫຼືອໃນວັນທີ 31 ມີນາ 2023** | | 330.000.000.000 | 24.735.724.722 | 14.102.046.968 | 13.852.046.968 | 238.189.041.241 | 564.207.140.598 | 1.185.086.000.497 |
| **ຍອດຍົກມາ ວັນທີ 1 ມັງກອນ 2024** | | 330.000.000.000 | 24.735.724.722 | 20.181.970.566 | 19.931.970.566 | 250.094.367.876 | 869.765.106.550 | 1.514.709.140.280 |
| ສໍາຮອງເງິນຕາມກົດໝາຍ | | - | - | - | - | - | - | - |
| ສໍາຮອງເງິນອື່ນໆ | | - | - | - | - | - | - | - |
| ກໍາໄລສຸດທິ | | - | - | - | - | 18.757.693.251 | - | 18.757.693.251 |
| ຈ່າຍເງິນປັນຜົນ | | - | - | - | - | - | - | - |
| ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 24.158.440.215 | 24.158.440.215 |
| **ຍອດເຫຼືອໃນວັນທີ 31 ມີນາ 2024** | | 330.000.000.000 | 24.735.724.722 | 20.181.970.566 | 19.931.970.566 | 268.852.061.127 | 893.923.546.765 | 1.557.625.273.745 |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ວັດຕານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່
**ວັນທີ: 03 ພຶດສະພາ 2024**

ພັນໄມລາ ສຸຄະບັນດິດ
ຜູ້ອໍານວຍການ ຝ່າຍການເງິນ
**ວັນທີ: 03 ພຶດສະພາ 2024**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານ ກະແສເງິນສົດ

ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2024

| | ບົດ ອະທິບາຍ | 31 ມີນາ 2024 ກີບ | 31 ມີນາ 2023 ກີບ |
|---|---|---|---|
| **ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລສຸດທິກ່ອນອາກອນກຳໄລ | | 22.449.840.291 | 25.103.008.814 |
| ການດັດແກ້ຈາກ: | | | |
| ຄ່າຫຼຸ້ຍຫ້ຽນ | 8 | 6.827.159.221 | 6.279.843.435 |
| ຄ່າຕັດຈ່າຍ | | - | 156.899 |
| ກຳໄລຈາກການຂາຍທີ່ດິນ, ສິ່ງປຸກສ້າງ ແລະ ອຸປະກອນ | | 5.174.793 | 468.221,83 |
| ຂາດທຶນຈາກອັດຕາແລກປ່ຽນ | | 2.671.890.536 | (2.113.768.416) |
| ລາຍຈ່າຍດອກເບ້ຍ | | 1.918.722.387 | 1.817.422.916 |
| ສຳຮອງເຄື່ອງໃນສາງ | | 525.476.435 | (2.279.639.221) |
| ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | (1.035.807.078) | (375.631.379) |
| ສຳຮອງໜີ້ຕ້ອງຮັບຈາກການຮັບຄືນສິນຄ້າ | | 1.162.860.867 | 1.289.154.374,00 |
| ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນ | | 34.525.317.451 | 29.721.015.644 |
| ການປ່ຽນແປງຈາກ ການດຳເນີນງານຂອງຊັບສິນ ແລະ ໜີ້ສິນ | | | |
| - ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | (1.533.079.424) | (1.324.787.329) |
| - ເຄື່ອງໃນສາງ | | 467.578.671 | 9.140.569.785 |
| - ຊັບສິນໝູນວຽນອື່ນໆ | | (12.397.548.953) | (8.769.412.253) |
| - ຊັບສິນບໍ່ໝູນວຽນອື່ນໆ | | - | - |
| - ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | 23.183.481.813 | 16.001.947.825 |
| - ເງິນມັດຈຳຈາກລູກຄ້າ | | (280.193.809) | 1.539.809.571 |
| - ໜີ້ສິນໝູນວຽນອື່ນໆ | | (7.159.291.765) | (2.264.788.919) |
| ກະແສເງິນສົດທີ່ເກີດຈາກການດຳເນີນງານ | | 36.806.263.985 | 44.044.354.324 |
| ຈ່າຍດອກເບ້ຍ | | (1.960.402.688) | (1.831.978.258) |
| ຈ່າຍອາກອນກຳໄລ | | - | (9.934.957.710) |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການດຳເນີນງານ | | 34.845.861.297 | 32.277.418.356 |
| **ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:** | | | |
| ຊື້ຊັບສິນບັດຄົງທີ່ | 8 | (19.308.831.532) | (2.681.173.384) |
| ຊື້ຊອບແວຄອມພິວເຕີ | | (37.719.913) | (30.448.627) |
| ຮັບເງິນຈາກການຂາຍຊັບສິນບັດຄົງທີ່ | | - | - |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ | | (19.346.551.445) | (2.711.622.011) |

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**
**ໃບລາຍງານ ກະແສເງິນສົດ**
**ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2024**

| | ບົດ ອະທິບາຍ | 31 ມີນາ 2024 ກີບ | 31 ມີນາ 2023 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການເງິນ:** | | | |
| ຮັບເງິນກູ້ຢືມຈາກທະນາຄານ | | 81.101.610.430 | 82.278.989.059 |
| ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ | | (87.410.838.478) | (116.199.178.197) |
| ຮັບເງິນກູ້ຢືມຈາກຮຸ້ນກູ້ | | - | - |
| ຈ່າຍເງິນປັນຜົນ | | - | - |
| ເງິນສົດສຸດທິຈາກກິດຈະກຳທາງການເງິນ | | (6.309.228.048) | (33.920.189.138) |
| **ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 9.190.081.803 | (4.354.392.794) |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ | | 97.622.510.973 | 38.288.451.914 |
| ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | (400.367.366) | 823.805.921 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | **106.412.225.410** | **34.757.865.041** |
| **ລາຍການບໍ່ແມ່ນເງິນສົດ** | | | |
| ໜີ້ຕ້ອງສົ່ງອື່ນໆຈາກການຊື້ຊັບສິນຄົງທີ່ | | - | - |
| ໜີ້ຕ້ອງສົ່ງດອກເບ້ຍ | | 41.680.300 | 14.555.342 |

**ວັດດານາ ສຸຄະບັນດິດ**
**ຜູ້ອຳນວຍການໃຫຍ່**
**ວັນທີ: 03 ພຶດສະພາ 2024**

**ພັນໂນລາ ສຸຄະບັນດິດ**
**ຜູ້ອຳນວຍການ ຝ່າຍການເງິນ**
**ວັນທີ: 03 ພຶດສະພາ 2024**

## 1 ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍສິນຄ້າ ແລະ ອຸປະກອນສຳລັບການກໍ່ສ້າງ. ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢູ່ອາໄສ ແລະ ສະໜອງການບໍລິການທີ່ກ່ຽວຂ້ອງ ໃຫ້ກັບທຸລະກິດຂາຍຍ່ອຍ.

ມີສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະ ຍັງມີສາຂາ 7 ສາຂາຄື: ສາຂາໂພນຕ້ອງ, ສາຂາສີໄຄ, ສາຂາໂຊກໃຫຍ່, ສາຂາປາກຊັນ, ສາຂາປາກເຊ, ສາຂາສະຫວັນນະເຂດ ແລະ ສາຂາທ່າແຂກ.

ເອກະສານລາຍງານການເງິນປະຈຳໄຕມາດ 1 ສະບັບນີ້ໄດ້ຜ່ານອະນຸມັດ ໂດຍຜູ້ອຳນວຍການ ໃນວັນທີ 3 ພຶດສະພາ 2024.

## 2 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສານັກງານຄະນະການມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສໍາລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສໍາລັບການນໍາ IFRS ມາໃຊ້ພາຍໃນໄລຍະເວລາສີ່ປີ. ຊຶ່ງໃນຂະນະນີ້ຜູ້ບໍລິຫານກໍາລັງກະກຽມແຜນປະຕິບັດການ ສໍາລັບການດໍາເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນໍາໃຊ້ອາດແຕກຕ່າງຢ່າງມີສາລະສໍາຄັນ ຈາກຫຼັກການບັນຊີ IFRS.

## 3. ການຄາດຄະເນ

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

## 4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ເງິນສົດໃນມື | 389.373.907 | 1.873.737.750 |
| ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ | 106.022.851.503 | 95.748.773.223 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 106.412.225.410 | 97.622.510.973 |

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງພາຍໃນປະເທດໃນ 4 ສະກຸນເງິນ ໂດລາສະຫະລັດ, ບາດ, ກີບ ແລະ ຢວນ ໃນບັນຊີກະແສລາຍວັນ.

## 5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ໜີ້ຕ້ອງຮັບການຄ້າ | 11.541.961.180 | 11.045.224.899 |
| ຫັກ ໜີ້ສົງໄສຈະເສຍ | (4.935.792.515) | (5.886.977.559) |
| ໜີ້ຕ້ອງຮັບການຄ້າ ສຸດທິ | **6.606.168.665** | **5.158.247.340** |
| | | |
| ເງິນກູ້ຢືມພະນັກງານ | 452.027.033 | 347.851.278 |
| ໜີ້ຕ້ອງຮັບອື່ນໆ (i) | 0 | 57.906.025 |
| | **452.027.033** | **405.757.303** |
| ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ | **7.058.195.698** | **5.564.004.643** |

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ມີນາ 2024 ມີອາຍຸການດັ່ງຕໍ່ນີ້:

| | **31 ມີນາ 2024 ກີບ** | **31 ທັນວາ 2023 ກີບ** |
|---|---:|---:|
| ບໍ່ຄົບກຳນົດ | 4.223.437.542 | 3.752.442.359 |
| ເກີນກຳນົດ | | |
| 1 - 3 ເດືອນ | 599.258.240 | 880.190.355 |
| 3 - 6 ເດືອນ | 179.674.612 | 525.615.903 |
| 6 - 12 ເດືອນ | 38.053.704 | 400.720.830 |
| ເກີນ 12 ເດືອນ | 6.501.537.082 | 5.486.255.452 |
| ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ | **11.541.961.180** | **11.045.224.899** |
| ຫັກ ໜີ້ສົງໄສຈະເສຍ | (4.935.792.515) | (5.886.977.559) |
| ໜີ້ຕ້ອງຮັບການຄ້າ ສຸດທິ | **6.606.168.665** | **5.158.247.340** |

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ 6 ເດືອນ ສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ. ການຕັ້ງໜີ້ສົງໄສຈະເສຍສຳລັບຍອດໜີ້ຕ້ອງຮັບຄ້າງຊຳລະເກີນ 6 ເດືອນ ຫຼັງຈາກຄົບການົດຊຳລະ ແລະ ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງການຊຳລະຂອງບັນຊີໜີ້ຕ້ອງຮັບ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອານາຄົດ. ຜູ້ບໍລິຫານເຊື່ອວ່າຈຳນວນເຫຼົ່ານີ້ ມີແນວໂນ້ມສູງທີ່ຈະເກັບເງິນຄືນໄດ້ພາຍໃນເດືອນຕໍ່ໄປ.

## 6. ສິນຄ້າໃນສາງ ສຸດທິ

| | **31 ມີນາ 2024 ກີບ** | **31 ທັນວາ 2023 ກີບ** |
|---|---:|---:|
| ສິນຄ້າໃນສາງ | 498.422.605.048 | 491.108.241.328 |
| ຫັກ: ຄ່າເຊື່ອມມູນຄ່າສິນຄ້າເຄື່ອນໄຫວຊ້າ | (7.120.753.674) | (6.532.248.329) |
| ຄ່າເຊື່ອມມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຈະໄດ້ຮັບ | (272.317.808) | (228.222.597) |
| ສິນຄ້າໃນສາງ ສຸດທິ | **491.029.533.566** | **484.347.770.402** |

ຜູ້ບໍລິຫານໄດ້ປະເມີນ ແລະ ທົບທວນຄືນການສຳຮອງເງິນແຮສຳລັບ ເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ, ເງິນແຮສຳລັບເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝໃນອະດີດ ແມ່ນໄດ້ດັດແກ້ໃຫ້ເພີ່ມຂຶ້ນເປັນຈຳນວນເງິນ 7.120 ລ້ານກີບ (ໃນປີ 2023: 6.532 ລ້ານກີບ) ເນື່ອງຈາກເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ສາມາດຂາຍໄດ້ຫລາຍຂຶ້ນ, ຜົນຈາກການປັບເພີ່ມ ດັ່ງກ່າວ ເຮັດໃຫ້ເງິນແຮ ແລະ ຕົ້ນທຶນຂາຍ ຖືກປັບໃຫ້ເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ການວິເຄາະຂ້າງເທິງ.

## 7. ຊັບສິນໝູນວຽນອື່ນໆ

| | ທົບທວນຄືນ<br>31 ມີນາ<br>2024<br>ກີບ | ກວດສອບ<br>31 ທັນວາ<br>2023<br>ກີບ |
|---|---|---|
| ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 12.349.299.598 | 4.583.529.979 |
| ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງສິນຄ້າ (i) | 4.443.592.121 | 4.065.261.221 |
| ເງິນຈ່າຍລ່ວງໜ້າຄ່າປະກັນໄພ | 436.471.844 | 74.945.474 |
| ເງິນຈ່າຍລ່ວງໜ້າຄ່າເຊົ່າ | 12.311.358.608 | 27.831.104.087 |
| ຊັບສິນໝູນວຽນອື່ນໆ (ii) | 4.095.568.058 | 1.869.277.514 |
| ຊັບສິນໝູນວຽນອື່ນໆ | 46.898.656.905 | 38.424.118.275 |

## 8. ທີ່ດິນ ແລະ ອຸປະກອນ, ສຸດທິ

| | 31 ມີນາ<br>2024<br>ກີບ | 31 ທັນວາ<br>2023<br>ກີບ |
|---|---|---|
| ຍອດຍົກມາສຸດທິໃນບັນຊີ | 1.171.299.214.767 | 904.691.252.324 |
| ການເພີ່ມຂຶ້ນ | 19.308.831.532 | 47.863.852.553 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 18.502.941.364 | 249.307.998.481 |
| ຂາຍຊັບສິນ | (5.174.793) | (486.421.338) |
| ຄ່າຫຼູ້ຍຫ້ຽນ | (6.827.159.221) | (30.077.467.253) |
| ຍອດເຫຼືອມູນຄ່າຕາມບັນຊີສຸດທິ | **1.202.278.653.650** | **1.171.299.214.767** |

ຍອດເພີ່ມຂຶ້ນໃນຊ່ວງລະຫວ່າງຮອບເວລາລາຍງານ ໄຕມາດ 1 ສິ້ນສຸດວັນທີ 31 ມີນາ 2024. ສ່ວນໃຫຍ່ເຄື່ອງໃຊ້ຫ້ອງການ ແລະ ອາຄານ ຍອດເພີ່ມຂຶ້ນທັງໝົດ 19.308 ລ້ານກີບ.

## 9. ຊັບສິນຄົງທີ່ ບໍ່ມີຕົນຕົນ, ສຸດທິ

| | 31 ມີນາ<br>2024<br>ກີບ | 31 ທັນວາ<br>2023<br>ກີບ |
|---|---|---|
| ຍອດຍົກມາສຸດທິໃນບັນຊີ | **365.075.938** | **116.392.238** |
| ການເພີ່ມຂຶ້ນ | 37.719.913 | 216.925.978,00 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 5.785.032 | 32.034.341 |
| ຄ່າຫຼູ້ຍຫ້ຽນ | 0 | (276.619) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **408.580.883** | **365.075.938** |

## 10. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ໜີ້ຕ້ອງສົ່ງການຄ້າ– ພາກສ່ວນທີ່ກ່ຽວຂ້ອງ | 18.521.456.476 | 11.399.309.064 |
| ໜີ້ຕ້ອງສົ່ງການຄ້າ– ບຸກຄົນທີສາມ | 69.017.906.565 | 53.248.165.530 |
| ໜີ້ຕ້ອງສົ່ງອື່ນໆ | 2.248.754.615 | 918.228.306 |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | **89.788.117.656** | **65.565.702.900** |

## 11. ເງິນກູ້ຢືມຈາກສະຖາບັນການເງິນ

| | 31 ມີນາ 2024 ກີບ | 31 ທັນວາ 2024 ກີບ |
|---|---|---|
| **ໝູນວຽນ** | | |
| ເງິນເບີກເກີນບັນຊີ | 31.286.397 | - |
| ເງິນກູ້ຢືມໄລຍະສັ້ນ | 40.356.259.290 | 54.694.740.214 |
| ສ່ວນທີ່ໝູນວຽນຂອງເງິນກູ້ຢືມໃນໄລຍະຍາວ | 30.973.530.533 | 26.353.809.980 |
| **ບໍ່ໝູນວຽນ** | | |
| ເງິນກູ້ຢືມໃນໄລຍະຍາວ | 53.069.849.760 | 48.063.332.611 |
| **ລວມເງິນກູ້ຢືມ** | 124.430.925.980 | 129.111.882.805 |

### ລາຍການເຄື່ອນໄຫວເງິນກູ້ຢືມມີດັ່ງນີ້

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ອັດຕາດອກເບ້ຍຄົງທີ່ | 122.462.444.695 | 120.016.741.878 |
| ອັດຕາດອກເບ້ຍຂຶ້ນລົງ | 1.968.481.285 | 9.095.140.927 |
| **ລວມເງິນກູ້ຢືມ** | 124.430.925.980 | 129.111.882.805 |

i) ເງິນກູ້ຢືມໄລຍະສັ້ນ ຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງມີອັດຕາດອກເບັ້ຍຕໍ່າຈຳກັດ (LRL) ບວກອັດຕາເປີເຊັນເພີ່ມຕໍ່ປີ ຕ້ອງຊຳລະຄືນພາຍໃນ ຫ້າ ເດືອນຫລັງຈາກເບີກເງິນກູ້. ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

ii) ເງິນກູ້ຢືມໄລຍະສັ້ນຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງ ຈໍານວນໃນສັນຍາມູນຄ່າ 30 ຕື້ ກີບ ເຊິ່ງມີອັດຕາດອກເບ້ຍ 6,05% ຕໍ່ປີ. ຕົ້ນທຶນເງິນກູ້ແມ່ນຈະຖືກຊໍາລະເປັນໄຕມາດ ແລະ ດອກເບັ້ຍຊໍາລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄໍ້າປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

iii) ເງິນກູ້ຢືມໄລຍະສັ້ນຈາກທະນາຄານທຸລະກິດຕ່າງປະເທດ, ເຊິ່ງຈໍານວນໃນສັນຍາມູນຄ່າ 250 ລ້ານບາດ ໃນອັດຕາດອກເບ້ຍຄົງທີ່ 4%. ການຊໍາລະຄືນແມ່ນພາຍໃນ 150 ວັນ ຫຼັງຈາກເບີກຖອນ ແລະ ດອກເບັ້ຍຊໍາລະທຸກໆເດືອນ. ມີຫຼັກຊັບຄໍ້າປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

iv) ເງິນກູ້ຢືມໄລຍະຍາວຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງຈໍານວນໃນສັນຍາ 50 ລ້ານ ບາດ ເຊິ່ງມີອັດຕາດອກເບ້ຍ 5% ຕໍ່ປີ, ເຊິ່ງມີກໍານົດເຖິງເດືອນທັນວາ 2025. ເງິນຕົ້ນຊໍາລະຄືນເປັນໄຕມາດເລີ່ມຈາກເດືອນມິຖຸນາ 2021 ແລະ ດອກເບັ້ຍຊໍາລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄໍ້າປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

v) ເງິນກູ້ຢືມໄລຍະຍາວຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງຈໍານວນໃນສັນຍາ 145 ລ້ານບາດ ດ້ວຍດອກເບັ້ຍ 5% ຕໍ່ປີ, ເຊິ່ງມີກໍານົດໃນວັນທີ 31 ພຶດສະພາ 2027. ເງິນຕົ້ນຊໍາລະຄືນເປັນໄຕມາດ ເລີ່ມແຕ່ວັນທີ 31 ສິງຫາ 2022 ແລະ ດອກເບັ້ຍຊໍາລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄໍ້າປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

vi) ເງິນກູ້ຢືມໄລຍະຍາວຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງຈໍານວນໃນສັນຍາ 25 ລ້ານບາດ ດ້ວຍດອກເບັ້ຍ 5% ຕໍ່ປີ, ເຊິ່ງມີກໍານົດໃນວັນທີ 31 ຕຸລາ 2027. ເງິນຕົ້ນຊໍາລະຄືນເປັນໄຕມາດ ເລີ່ມແຕ່ວັນທີ 23 ພະຈິກ 2023 ແລະ ດອກເບ້ຍຊໍາລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄໍ້າປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ.

ຄ່າທໍານຽມບໍລິການທາງການເງິນຕັດຈ່າຍ ແມ່ນຮັບຮູ້ເປັນລາຍຈ່າຍລ່ວງໜ້າເມື່ອເກີດຂຶ້ນ ແລະ ຕັດຈ່າຍໂດຍວິທີຕາມອາຍຸຂອງສັນຍາ.

## 12. ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້

ບໍລິສັດໄດ້ອອກຮຸ້ນກູ້ ໂດຍມີເງື່ອນໄຂສໍາຄັນດັ່ງລຸ່ມນີ້:

| **ຄໍາອະທິບາຍ** | **ຂໍ້ມູນ** |
|---|---|
| ປະເພດ | ຮຸ້ນກູ້ລະບຸຊື່ຜູ້ຖື ແບບບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ |
| ການຊໍາລະ | ຊໍາລະຄືນເງິນຕົ້ນເມື່ອຄົບກໍານົດ |
| ລາຄາສະເໜີຂາຍລວມ | 50.000ໂດລາ ສະຫະລັດ/ໜ່ວຍ,<br>ທັງໝົດ 3.000.000 ໂດລາ ສະຫະລັດ |
| ຈໍານວນໜ່ວຍທັງໝົດ | 60 ໜ່ວຍ |
| ອັດຕາດອກເບ້ຍ | 7,5% (ຄົງທີ່) ຕໍ່ປີ |
| ການຈ່າຍດອກເບ້ຍ | ທຸກໆ ຫົກ ເດືອນ (2 ຄັ້ງ/ປີ) |
| ອາຍຸ | ສີ່ ປີ |
| ວັນຄົບກໍານົດອາຍຸການໄຖ່ຖອນ | 19 ພຶດສະພາ 2027 |

## 13. ສຳຮອງ

**ສຳຮອງຕາມກົດໝາຍ**

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ຍອດຍົກມາ | 20.181.970.566 | 14.102.046.968 |
| ການເພີ່ມຂຶ້ນ | - | 6.079.923.598 |
| ຍອດເຫຼືອທ້າຍ | **20.181.970.566** | **20.181.970.566** |

ເງິນສຳຮອງຕາມກົດໝາຍໄດ້ກຳນົດຕາມ ມາດຕາທີ່ 156 ໃນກົດໝາຍວິສາຫະກິດ ຂອງ ສປປ ລາວ. ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງ ຂອງກຳໄລສຸດທິປະຈຳປີ ຖືກຕັ້ງໄວ້ເປັນສຳຮອງຕາມກົດໝາຍຈົນກ່ວາເງິນສຳຮອງດັ່ງກ່າວ ຈະຮອດ 50% ຂອງທຶນຈົດທະບຽນ.

**ສຳຮອງອື່ນໆ.**

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ. ໂດຍເປັນໄປຕາມນະໂຍບາຍຂອງ ທາງ ບໍລິສັດ ທີ່ໄດ້ຮັບການຈົດທະບຽນກັບ ກະຊວງການເງິນ ສປປ ລາວ ໃນວັນທີ 22 ກັນຍາ 2015. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວ ໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

## 14. ເງິນປັນຜົນ

ຈາກການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໃນວັນທີ່ 08 ເມສາ 2024, ໄດ້ສະຫຼຸບວ່າ ຈະຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງປີ 2023 ໃນອັດຕາ 120 ກີບ ຕໍ່ຮຸ້ນ (ປີ 2022: 100 ກີບ ຕໍ່ ຮຸ້ນ) ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 19.800 ລ້ານກີບ (ປີ 2022: 16.500 ລ້ານກີບ) ເງິນປັນຜົນຖືກຈ່າຍໃຫ້ກັບຜູ້ຖືຮຸ້ນໃນວັນທີ 06 ພຶດສະພາ 2024.

## 15. ລາຍຈ່າຍອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020. ບໍລິສັດຈະຕ້ອງຈ່າຍອາກອນກຳໄລ ເພື່ອໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 20%.

ບໍລິສັດ ບໍ່ໄດ້ຮັບຮູ້ອາກອນລາຍໄດ້, ການຈ່າຍ ຫຼື ຮັບ ໃນອະນາຄົດສຳລັບຜົນແຕກຕ່າງຊົ່ວຄາວ. ອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຂອງໄລຍະ ແລະ ອັດຕາອາກອນທີ່ກ່ຽວຂ້ອງ.

| | 31 ມີນາ 2024 ກີບ |
|---|---|
| ***ການສົມທຽບລະຫວ່າງອາກອນລາຍໄດ້ ແລະ ກຳໄລທາງບັນຊີ:*** | |
| ກຳໄລທາງບັນຊີກ່ອນອາກອນ | 22.449.840.291 |
| ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການສຳລັບອາກອນ (1) | (3.989.104.213) |
| ອາກອນລາຍໄດ້ | 18.460.735.200 |
| ຄິດໄລ່ອາກອນ ໃນອັດຕາອາກອນ 20% | **3.692.147.040** |

(1) ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການ ສໍາລັບອາກອນສ່ວນໃຫຍ່ປະກອບມີ ຂາດທຶນທີ່ບໍ່ໄດ້ຮັບຮູ້ຈາກການປະເມີນຊັບສິນ, ໜີ້ສິນ ໃນສະກຸນເງິນຕາຕ່າງປະເທດໃນມື້ປິດບັນຊີ.

## 16. ກໍາໄລຕໍ່ຮຸ້ນ

ໃນວັນທີ່ 31 ມີນາ 2024 ລາຍຮັບຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການແບ່ງປັນກໍາໄລສຸດທິຂອງຜູ້ຖືຮຸ້ນຂອງບໍລິສັດໂດຍຈໍານວນສະເລ່ຍນໍ້າໜັກຂອງຮຸ້ນສາມັນໃນລະຫວ່າງປີ.

| ຕົວສະເລ່ຍຖ່ວງນໍ້າໜັກຮຸ້ນສາມັນ(ຮຸ້ນ) | **31 ມີນາ 2024 ກີບ** | **31 ມີນາ 2023 ກີບ** |
|---|---|---|
| ກໍາໄລສຸດທິສໍາລັບໄລຍະທີ່ສາມາດຈ່າຍໃຫ້ຜູ້ຖືຮຸ້ນ (ກີບ) | 18.757.693.251 | 20.234.062.152 |
| ຕົວສະເລ່ຍຖ່ວງນໍ້າໜັກຮຸ້ນສາມັນ(ຮຸ້ນ) | 165.000.000 | 165.000.000 |
| ກໍາໄລຕໍ່ຮຸ້ນ (ກີບ) | 114 | 123 |

## 17. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງກັບການບໍລິຫານໃນບໍລິສັດ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ ຫລື ໂດຍທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍ ສື່ກາງ, ການຄວບຄຸມ ຫຼື ແມ່ນຄວບຄຸມໂດຍ ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປທີ່ມີ ບໍລິສັດ ລວມທັງ ບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດ ອື່ນໆທີ່ກ່ຽວຂ້ອງກິດຈະການຂອງ ບໍລິສັດ. ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ ໂດຍກົງ ຫຼື ທາງອ້ອມ, ມີສິດໃນການລົງຄະແນນສຽງຂອງ ບໍລິສັດ ທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສໍາຄັນໃນວິສາຫະກິດ, ຜູ້ບໍລິຫານ ລວມທັງຜູ້ອໍານວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນໄຕມາດ 1 ສິ້ນສຸດວັນທີ 31 ມີນາ 2024 ທີ່ມີຄວາມສໍາຄັນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

### 17.1 ລາຍຮັບ ແລະ ລາຍຈ່າຍ

| | **31 ມີນາ 2024 ກີບ** | **31 ມີນາ 2023 ກີບ** |
|---|---|---|
| ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ | 35.042.681.333 | 35.358.363.831 |
| ຄ່າເຊົ່າຈ່າຍ | 4.373.714.752 | 3.383.520.191 |
| | **39.416.396.085** | **38.741.884.022** |

**17.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ**

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ລ່ວງໜ້າຄ່າເຊົ່າ – ພາກສ່ວນທີ່ກ່ຽວຂ້ອງ | 38.230.306.870 | 36.561.604.277 |
| ໜີ້ຕ້ອງສົ່ງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ | 18.521.456.476 | 11.399.309.064 |

**17.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ**

ຜູ້ບໍລິຫານຫຼັກລວມເຖິງຜູ້ອໍານວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສໍາລັບການ ບໍລິການການຈ້າງງານແມ່ນດັ່ງຕໍ່ໄປນີ້:

| | 31 ມີນາ 2024 ກີບ | 31 ມີນາ 2023 ກີບ |
|---|---|---|
| ສໍາລັບ ໄຕມາດ 1 | 1.870.796.680 | 1.035.985.000 |

**18. ລາຍຈ່າຍໃນການຂາຍ ແລະ ບໍລິຫານ**

ບໍລິສັດໄດ້ມີຄ່າໃຊ້ຈ່າຍໃນການຂາຍ ແລະ ຄ່າໃຊ້ຈ່າຍບໍລິຫານເພີ້ມຂຶ້ນ ເນື່ອງຈາກວ່າບໍລິສັດໄດ້ມີການຂະຫຍາຍສາຂາໃໝ່, ເຮັດໃຫ້ຈໍານວນພະນັກງານກໍ່ເພີ່ມຂຶ້ນ ແລະ ຍັງມີຊັບສິນຖາວອນທີ່ເພີ່ມຂຶ້ນຕາມການຂະຫຍາຍສາຂາຈຶ່ງໄດ້ສົ່ງຜົນໃຫ້ມີຄ່າເຊື່ອມລາຄາເພີ່ມຂຶ້ນມາຕາມລໍາດັບ.

**19. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສໍາຄັນ**

ພັນທະຄ່າເຊົ່າໃນການດໍາເນີນງານ, ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້. ຊຶ່ງໄລຍະການໃຫ້ເຊົ່າແມ່ນ 1-5 ປີ, ແລະ ສ່ວນໃຫຍ່ຂອງສັນຍາເຊົ່ານີ້ແມ່ນສາມາດຕໍ່ໄດ້ເມື່ອສັນຍາເກົ່າໝົດ.

| | 31 ມີນາ 2024 ກີບ | 31 ທັນວາ 2023 ກີບ |
|---|---|---|
| ບໍ່ເກີນ 1 ປີ | - | - |
| 1 - 5 ປີ | 28.095.204.665 | 30.300.203.016 |
| ຍອດເຫຼືອທ້າຍ | **28.095.204.665** | **30.300.203.016** |